# ລະບົບການຕອບໂຕ້ຕໍ່ວິກິດການຂອງລັດຈໍເຈຍສໍາລັບບຸກຄົນທີ່ມີຄວາມພິການທາງດ້ານພັດທະນາການ

ພະແນກຄວາມພິການທາງດ້ານພັດທະນາການ

DBHDD

ລະບົບການຕອບໂຕ້ຕໍ່ວິກິດການຂອງລັດຈໍເຈຍສໍາລັບບຸກຄົນທີ່ມີຄວາມພິການທາງດ້ານພັດທະນາການ (GCRS-DD) ແມ່ນເປັນລະບົບການດູແລເອົາໃຈໃສ່ທີ່ໄດ້ຮັບການປະເມີນຜ່ານທາງປະຕູດຽວ, ເຊິ່ງເປັນສາຍຕິດຕໍ່ເລື່ອງການເຂົ້າເຖິງວິກິດການຂອງລັດຈໍເຈຍ (GCAL). ລະບົບນີ້ (GCRS-DD) ໃຫ້ການຊ່ວຍເຫຼືອວິກິດການທີ່ເນັ້ນໃສ່ຊຸມຊົນທີ່ໃຫ້ເປັນທາງເລືອກອັນໜຶ່ງກັບການຈັດວາງງານທາງດ້ານສະຖາບັນ, ການດູແລເອົາໃຈໃສ່ໃນຫ້ອງສຸກເສີນ, ຫຼືການພົວພັນກັບການບັງຄັບໃຊ້ກົດໝາຍ (ລວມທັງການຄຸມຂັງ). ລະບົບນີ້ (GCRS-DD) ໃຫ້ການບໍລິການກັບບຸກຄົນທີ່ມີຄວາມພິການທາງດ້ານພັດທະນາການອາຍຸ 5 ປີ ຫຼືແກ່ກວ່ານັ້ນທີ່ຢູ່ໃນ *ສະພາບວິກິດການຮຸນແຮງ* ເຊິ່ງເປັນຜູ້ທີ່

- ມີຫຼັກຖານເປັນເອກະສານອ້າງອີງວ່າມີຄວາມພິການທາງດ້ານປັນຍາ/ພັດທະນາການກ່ອນຮອດອາຍຸ 18 ປີ ຫຼືມີຄວາມພິການກ່ຽວຂ້ອງໃກ້ຄຽງກ່ອນຮອດອາຍຸ 22 ປີ ຫຼື
- ໄດ້ຜ່ານການກວດແລ້ວ ມີການບົ່ງບອກວ່າມີຄວາມພິການທາງດ້ານພັດທະນາການ.

## ຜູ້ໃຫ້ການດູແລຄວນຈະເຮັດແນວໃດເມື່ອຢູ່ໃນສະພາບທີ່ເກີດມີວິກິດການ

- ຄວາມພະຍາຍາມເບື້ອງຕົ້ນແມ່ນຕ້ອງແກ້ໄຂ ແລະ/ຫຼືເອົາບຸກຄົນນັ້ນກັບເຂົ້າສູ່ສະພາວະເດີມກ່ອນເກີດວິກິດການ.
- ຖ້າບຸກຄົນນັ້ນຫາກມີແຜນການທາງດ້ານພຶດຕິກໍາ, ໃຫ້ໃຊ້ບັນດາຍຸດທະສາດທີ່ມີຢູ່ໃນແຜນການນັ້ນ ເພື່ອແກ້ໄຂວິກິດການ.
- ຖ້າບໍ່ສາມາດແກ້ໄຂສະຖານະການໄດ້ ແລະບຸກຄົນນັ້ນ ຫຼືຜູ້ອື່ນໆຢູ່ໃນຄວາມສ່ຽງຕໍ່ການໄດ້ຮັບອັນຕະລາຍ, ໃຫ້ໂທຫາ GCAL (1-800-715-4225).
- ຖ້າມີເຫດການສຸກເສີນທາງດ້ານການແພດ ຫຼືກໍາລັງມີການກໍ່ອາດຊະຍາກໍາຂຶ້ນ, ໃຫ້ໂທຫາ 911.

ພະນັກງານຮັບແຈ້ງຂອງ GCAL ຈະປະເມີນສະຖານະການ ແລະແກ້ໄຂວິກິດການໂດຍທາງໂທລະສັບ ຫຼືສົ່ງທີມຊ່ວຍເຫຼືອວິກິດການເຄື່ອນທີ່ລົງໄປ ຖ້າຫາກວ່າມີຄວາມຈໍາເປັນຕ້ອງໄດ້ເຮັດການຊ່ວຍເຫຼືອແບບໜ້າຕໍ່ໜ້າ.

## ທີມຊ່ວຍເຫຼືອວິກິດການເຄື່ອນທີ່

ຢູ່ໃນລະດັບຕໍ່າສຸດນັ້ນ ທີມຊ່ວຍເຫຼືອວິກິດການເຄື່ອນທີ່ຈະປະກອບມີພະນັກງານສັງຄົມດ້ານການປິ່ນປົວທີ່ມີໃບອະນຸຍາດຮັບຮອງ (LCSW), ຊ່ຽວຊານທາງດ້ານພຶດຕິກໍາ, ແລະພະນັກງານຊ່ວຍໂດຍກົງຢູ່ໃນນັ້ນ. ສະມາຊິກທີມຜູ້ອື່ນໆອາດຈະຍັງລວມມີພະຍາບານທີ່ມີທະບຽນອະນຸຍາດ, ພະນັກງານດ້ານຄວາມປອດໄພ, ນັກສັງຄົມສົງເຄາະເພີ່ມເຕີມ ແລະພະນັກງານຊ່ວຍອີກ. ຈະມີແພດໄວ້ໃຫ້ສໍາລັບການປຶກສາຫາລື.

ທີມຊ່ວຍເຫຼືອວິກິດການເຄື່ອນທີ່ຈະມາຮອດບ່ອນເກີດວິກິດການພາຍໃນເວລາ 1½ ຊົ່ວໂມງ ເພື່ອປະເມີນສະພາບຂອງວິກິດການ. ຫຼັງຈາກໄດ້ເຮັດການປະເມີນບຸກຄົນຢູ່ໃນວິກິດການແລ້ວ, ທາງພະນັກງານສັງຄົມດ້ານການປິ່ນປົວທີ່ມີໃບອະນຸຍາດ (LCSW) ຈະໃຫ້ຄໍາແນະນໍາທັງໝົດສໍາລັບການຊ່ວຍເຫຼືອທີ່ຕ້ອງໄດ້ສືບຕໍ່ ແລະນໍາສົ່ງຕໍ່ໄປຮັບການຊ່ວຍເຫຼືອເພີ່ມເຕີມຈາກບັນດາບຸກຄົນ, ຄອບຄົວ/ຜູ້ໃຫ້ການດູແລ, ແລະພາກສ່ວນກ່ຽວຂ້ອງອື່ນໆ (ເຊັ່ນ: ຜູ້ປະສານງານໃຫ້ການຊ່ວຍເຫຼືອ, ຜູ້ປະສານງານໃຫ້ການບໍລິການຂອງລັດ, ຜູ້ບໍລິການບັນຊີລາຍການວາງແຜນ, ແລະການຮັບເອົາເຂົ້າມາ ແລະການປະເມີນຜົນ) ພາຍໃນເວລາ 24 ຊົ່ວໂມງ.

## ການໃຫ້ບໍລິການຊ່ວຍເຫຼືອ

ທີມຊ່ວຍເຫຼືອວິກິດການເຄື່ອນທີ່ຈະປະສານງານເລື່ອງການຊ່ວຍເຫຼືອທີ່ເຮັດຢູ່ໃນບ້ານ ແລະຢູ່ນອກບ້ານດ້ວຍການໃຫ້ບໍລິການໃນກອບເວລາອັນຈໍາກັດ (ບໍ່ເກີນ 7 ວັນ) ເພື່ອແກ້ໄຂວິກິດການນັ້ນ. ຖ້າຈະມີການຕໍ່ເວລາຊ່ວຍເຫຼືອເກີນກວ່າ 7 ວັນແລ້ວ ແມ່ນຈະຕ້ອງໄດ້ຮັບການອະນຸມັດໂດຍທາງຜູ້ບໍລິຫານການໃຫ້ບໍລິການປະຈໍາພື້ນທີ່, ຄວາມພິການທາງດ້ານພັດທະນາການ ຢູ່ໃນພື້ນທີ່ເຂດທີ່ຢູ່ອາໃສຂອງບຸກຄົນນັ້ນ.

- ສະຖານທີ່ໃຫ້ການຊ່ວຍເຫຼືອວິກິດການທີ່ຢູ່ນອກບ້ານແມ່ນຈະມີໃຫ້ສໍາລັບຜູ້ໃຫຍ່ ແລະໃຫ້ບໍລິການບໍ່ເກີນກວ່າ 4 ຄົນຕໍ່ຄັ້ງໜຶ່ງ.
- ສະຖານທີ່ໃຫ້ການຊ່ວຍເຫຼືອຊົ່ວຄາວ ແລະກະທັນຫັນ (TIS) ແມ່ນມີໃຫ້ສໍາລັບເດັກນ້ອຍ/ໄວລຸ້ນທີ່ມີອາຍຸ 10–17 ປີ ແລະໃຫ້ບໍລິການບໍ່ເກີນກວ່າ 4 ຄົນຕໍ່ຄັ້ງໜຶ່ງ.
- ການຊ່ວຍເຫຼືອຢູ່ໃນບ້ານແບບພິເສດແມ່ນໄດ້ຈັດໃຫ້ກັບເດັກນ້ອຍອາຍຸ 5–9 ປີ.

ສໍາລັບຂໍ້ມູນເພີ່ມເຕີມ, ໃຫ້ຕິດຕໍ່ກັບທາງ DBHDD, ພະແນກຄວາມພິການທາງດ້ານພັດທະນາການ:

(404) 463-8037